UNITED NATIONS
LAO PDR

<u>ບົດຖະແຫຼງຂ່າວ</u>

ກອງປະຊຸມໂຕະມົນປະຈຳປີ **2022**

**"**ເພີ່ມທະວີການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ**-**ສັງຄົມແຫ່ງຊາດ **5** ປີ ຄັ້ງທີ **IX (**ສະຫຼຸບຄືນຜົນໄດ້ຮັບໃນປີ **2022** ແລະ ແຜນສຳລັບປີ **2023),** ເປົ້າໝາຍການພັດທະນາ ແບບຍືນຍົງ **(SDGs)** ແລະ ການຫຼຸດພົ້ນອອກຈາກສະຖານະພາບ **LDC"**

(ຄັ້ງວັນທີ 26 ມັງກອນ 2023)

(ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ)

---

ບັນດາສື່ມວນຊົນ, ແຂກທີ່ມີກຽດ, ທ່ານຍິງ ແລະ ທ່ານຊາຍ **!**

ໃນນາມປະທານກອງປະຊຸມ, ຂ້າພະເຈົ້າ ມີຄວາມຮູ້ສຶກພາກພູມໃຈ ແລະ ເປັນກຽດຢ່າງຍິ່ງ ທີ່ໄດ້ມີໂອກາດ ນຳສະເໜີຕໍ່ສື່ມວນຊົນ ກ່ຽວກັບຜົນຂອງກອງປະຊຸມໂຕະມົນ ປະຈຳປີ 2022 ທີ່ໄດ້ຈັດຂຶ້ນ ຢູ່ນະຄອນຫຼວງວຽງຈັນ ໃນວັນທີ 26 ມັງກອນ 2023 ໃນຄັ້ງນີ້, ເຊິ່ງກອງປະຊຸມໄດ້ດຳເນີນດ້ວຍບັນຍາກາດສ້າງສັນ, ກົງໄປກົງມາ, ມີຄວາມເຂົ້າອົກເຂົ້າໃຈ, ໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມພັດທະນາ ແລະ ດ້ວຍຄວາມຮັບຜິດຊອບສູງ ຂອງຜູ້ເຂົ້າຮ່ວມກອງປະຊຸມໄດ້ສຳເລັດລົງດ້ວຍຜົນສຳເລັດອັນຈົບງາມ.

ບັນດາທ່ານແຂກທີ່ມີກຽດ, ທ່ານຍິງ ແລະ ທ່ານຊາຍ **!**

ດັ່ງທີ່ບັນດາທ່ານຊາບ ເພື່ອບັນລຸໄດ້ເປົ້າໝາຍ ແລະ ວາລະການພັດທະນາແຫ່ງຊາດ ລວມທັງເປົ້າໝາຍການພັດທະນາແບບຍືນຍົງ (SDG) ແລະ ການກະກຽມຄວາມພ້ອມໃນການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາຂອງ ສປປ ລາວ, ລັດຖະບານແຫ່ງ ສປປ ລາວ ມີຄວາມສະດຸ້ງໄວ ແລະ ເຫັນໄດ້ຄວາມສຳຄັນຂອງການຮ່ວມມືກັບບັນດາປະເທດເພື່ອນມິດ ແລະ ການມີສ່ວນຮ່ວມ ຂອງທຸກພາກສ່ວນ ຈຶ່ງໄດ້ຖືເອົາຂະບວນການໂຕະມົນ ເປັນເວທີ ແລະ ກົນໄກແຫ່ງການປຶກສາຫາລື ໃນລະດັບນະໂຍບາຍ ເພື່ອສ້າງຄວາມເຂົ້າໃຈ ຕໍ່ທິດທາງ ແລະ ໜ້າວຽກຈຸດສຸມຂອງການພັດທະນາ ຢູ່ ສປປ ລາວ ໃນແຕ່ລະປີ, ເຊິ່ງປີ 2022 ນີ້ ຫົວຂໍ້ຂອງກອງປະຊຸມໂຕະມົນ ຂອງພວກເຮົາແມ່ນ: "ເລັ່ງລັດການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະ ກິດ-ສັງຄົມແຫ່ງຊາດ **5** ປີ ຄັ້ງທີ **IX (**ສະຫຼຸບຄືນຜົນໄດ້ຮັບໃນປີ **2022** ແລະ ແຜນສຳລັບປີ **2023),** ເປົ້າໝາຍການພັດທະນາແບບຍືນຍົງ **(SDGs)** ແລະ ການຫຼຸດພົ້ນອອກຈາກສະຖາ ນະພາບປະເທດດ້ອຍພັດທະນາ**."**

ໃນກອງປະຊຸມ ໄດ້ຮ່ວມກັນຄົ້ນຄວ້າປະກອບຄຳຄິດຄຳເຫັນໃນ 5 ຫົວຂໍ້ຕ່າງໆທີ່ສຳຄັນ ຄື: (1) ຜົນສຳເລັດໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປີ 2022 ແລະ ແຜນບູລິມະສິດປີ 2023. (2) ຍຸດທະສາດການເງິນ ເພື່ອສະໜັບສະໜູນເຂົ້າໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX; (3) ຂອບການຟື້ນຟູເສດຖະກິດຂອງ ສປປ ລາວ; (4) ຄວາມຄືບ ໜ້າໃນການກະກຽມຍຸດທະສາດການຂ້າມຜ່ານ ອອກຈາກສະຖານະພາບການດ້ອຍພັດທະນາຢ່າງໂລ່ງລ່ຽນຂອງ ສປປ ລາວ; ແລະ (5) ທິດທາງໃນຕໍ່ໜ້າການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນພາຍໃຕ້ແຜນດຳເນີນງານຖະແຫຼງການວຽງຈັນ ແລະ ການທົບທວນໜ່ວຍງານຂະແໜງການ.

ສະເໜີຕໍ່ບັນດາທ່ານວ່າ, ໃນໄລຍະໜຶ່ງປີຜ່ານມາ ເຖິງແມ່ນວ່າ ສປປ ລາວ ຈະພົບກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍດ້ານ ເນື່ອງຈາກໄດ້ຮັບຜົນກະທົບຈາກການຜັນແປຢ່າງສັບສົນໃນທຸກດ້ານ ຈາກສະພາບສາກົນ-ພາກພື້ນ, ພາຍໃນປະເທດ ສືບຕໍ່ມີຄວາມຫຍຸ້ງຍາກໃນທັງທາງດ້ານເສດຖະກິດມະຫາພາກ, ການແຜ່ລະບາດຂອງພະຍາດ ລວມທັງໄພທຳມະຊາດ ແລະ ອື່ນໆ, ແຕ່ໂດຍພາຍໃຕ້ການນຳພາ ຂອງສູນກາງພັກ, ການຕິດຕາມກວດກາຊຸກຍູ້ຢ່າງເປັນປະຈຳ ຂອງສະພາແຫ່ງຊາດ, ລັດຖະບານ ກໍ່ໄດ້ສືບຕໍ່ເອົາໃຈໃສ່ຊີ້ນຳການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນໄລຍະຜ່ານມາຢ່າງແທດເຖິງ ແລະ ໃກ້ຊິດ ອັນເຮັດໃຫ້ເສດຖະກິດຂະຫຍາຍຕົວໄດ້ ໃນລະດັບ 4,4%, ສາມາດຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ, ເສດຖະກິດສືບຕໍ່ຂະຫຍາຍຕົວໃນລະດັບດີສົມຄວນ; ຊີວິດການເປັນຢູ່ ຂອງປະຊາຊົນກໍ່ໄດ້ຮັບການແກ້ໄຂໃຫ້ດີຂຶ້ນເປັນກ້າວໆ ຄວາມສະຫງົບ ແລະ ຄວາມເປັນລະບຽບຂອງສັງຄົມສືບຕໍ່ຮັບປະກັນໂດຍພື້ນຖານ. ສິ່ງສຳຄັນແມ່ນ ທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາ ຫຼື ODA ໄດ້ສືບຕໍ່ມີບົດບາດສຳຄັນ ໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ໂດຍໄດ້ຮັບການສະໜັບສະໜູນ ແລະ ການຮ່ວມມືເປັນຢ່າງດີຈາກຄູ່ຮ່ວມພັດທະນາ ແລະ ທຸກພາກສ່ວນ.

ບົນພື້ນຖານການຮັບຟັງການລາຍງານ ແລະ ປະກອບຄຳຄິດຄຳເຫັນຕະຫຼອດໄລຍະໜຶ່ງວັນທີ່ຜ່ານມານີ້, ຂ້າພະເຈົ້າ ຂໍສະເໜີແລກປ່ຽນບາງຈຸດຕື່ມ ດັ່ງນີ້:

1. ພວກເຮົາຈະໄດ້ພ້ອມກັນ ສືບຕໍ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ສຳລັບປີ 2023 ແລະ ສອງວາລະແຫ່ງຊາດ ໃຫ້ສຳເລັດຕາມຄາດ ໝາຍທີ່ສະພາແຫ່ງຊາດໄດ້ຮັບຮອງ;

2. ສືບຕໍ່ເຊື່ອມສານບັນດາເປົ້າໝາຍການພັດທະນາແບບຍືນຍົງ ແລະ ການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈຳປີ 2023 ແລະ ສູ້ຊົນ ເພື່ອບັນລຸເປົ້າໝາຍພັດທະນາແບບຍືນຍົງ ແລະ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2026 ດ້ວຍການສຸມທຶນຮອນທີ່ມີ ເພື່ອສຸມໃສ່ການພັດທະນາຊັບພະຍາກອນມະນຸດທີ່ຮັບປະກັນຄຸນນະພາບ, ເພີ່ມທະວີການຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດ ໝາຍຢ່າງເຂັ້ມງວດ, ພະຍາຍາມທຸກຄວາມສາມາດ ເພື່ອຫຼຸດຜ່ອນຄວາມແຕກໂຕນ ຂອງການພັດທະນາ ລະຫວ່າງ ຕົວເມືອງ ແລະ ຊົນນະບົດ, ລົບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ແລະ ເພື່ອແກ້ໄຂຄວາມທຸກຍາກ ແລະ ສ້າງຂີດຄວາມສາມາດໃນການແຂ່ງຂັນຂອງພາກທຸລະກິດພາຍໃນ ດ້ວຍການສ້າງສະພາບແວດລ້ອມການດຳເນີນທຸລະກິດທີ່ເອື້ອອຳນວຍໃຫ້ດີຂຶ້ນ;

3. ເພີ່ມຄວາມເອົາໃຈໃສ່ໃນການຊຸກຍູ້ການຈັດຕັ້ງປະຕິບັດຍຸດທະສາດການເງິນ ເພື່ອສະ ໜັບສະໜູນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX;

4. ຕັ້ງໜ້າຈັດຕັ້ງຜັນຂະຫຍາຍ ຂອບການຟື້ນຟູເສດຖະກິດ ຂອງ ສປປ ລາວ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້;

5. ພະຍາຍາມຍົກລະດັບການກະກຽມຄວາມພ້ອມດ້ານຕ່າງໆ ໃນການຮັບມືກັບໄພພິບັດທາງທຳມະຊາດ, ດ້ວຍການສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານປ້ອງກັນ ແລະ

ຄວບຄຸມໄພພິບັດ, ການປັບປຸງລະບົບການເຕືອນໄພລ່ວງໜ້າ, ການສຶກສາຄວາມສ່ຽງ ແລະ ການສ້າງແຜນຫຼຸດຜ່ອນຄວາມສ່ຽງໄພພິບັດ ແລະ ເອົາໃຈໃສ່ໃຫ້ຊ່ວຍເຫຼືອແກ່ຊຸມຊົນທີ່ມີຄວາມສ່ຽງສູງ;

6. ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານ ການຮ່ວມມືເພື່ອການພັດທະນາ ຕາມກົນໄກຂອງຂະບວນການໂຕະມົນທີ່ເຄີຍໄດ້ຈັດຕັ້ງປະຕິບັດຜ່ານມາ ລວມທັງ ໜ່ວຍງານຂະ ແໜງການ ກໍຄື ແຜນດຳເນີນງານຂອງຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມ ເພື່ອການພັດທະນາທີ່ມີປະສິດທິພາບ ແລະ ປະສິດທິຜົນສູງ.

ພ້ອມດຽວກັນນີ້, ໃນປີ 2023 ສປປ ລາວ ມີວຽກຫລາຍຢ່າງ ທີ່ຈະສືບຕໍ່ຈັດຕັ້ງປະຕິບັດ ເປັນຕົ້ນແມ່ນ ການປະເມີນກາງສະໄໝ ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ການຈັດຕັ້ງປະຕິບັດ ປີສຸດທ້າຍສອງວາລະແຫ່ງຊາດຂອງລັດຖະບານ ແລະ ການກະກຽມຄວາມພ້ອມໃນການເປັນເຈົ້າພາບ ກອງປະຊຸມ ສຸດຍອດອາຊຽນ ໃນປີ 2024.

ເພື່ອເຮັດໃຫ້ໝາກຜົນ ຂອງການປຶກສາຫາລື ໃນກອງປະຊຸມໂຕະມົນປະຈຳປີ 2022 ນີ້ ໄດ້ຮັບການຈັດຕັ້ງຜັນຂະຫຍາຍ ຢ່າງມີປະສິດທິຜົນສູງສຸດ, ກະຊວງແຜນການ ແລະ ການລົງທຶນ ໃນນາມຜູ້ປະຈຳການຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ ແລະ ພາກສ່ວນກ່ຽວຂ້ອງ ຈະໄດ້ຄົ້ນຄ້ວາ ແລະ ສັງລວມເອົາຄຳຄິດເຫັນຕ່າງໆ ທີ່ເປັນເອກະພາບກັນໃນກອງປະຊຸມຄັ້ງນີ້ ລາຍງານລັດຖະບານ ເພື່ອມີທິດຊີ້ນຳ. ພ້ອມດຽວກັນນັ້ນ, ຂໍຮຽກຮ້ອງໃຫ້ບັນດາຂະແໜງການ-ອົງການ ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ, ບັນດາຄູ່ຮ່ວມພັດທະນາ, ພາກເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມ ສືບຕໍ່ເພີ່ມທະວີວຽກງານການປະສານງານສົມທົບກັນຢ່າງສະໜິດແໜ້ນ ເພື່ອຜັນຂະຫຍາຍເປັນແຜນງານ, ໂຄງການ ແລະ ກິດຈະກຳລະອຽດ, ທັງນີ້ ກໍ່ເພື່ອປະກອບ ສ່ວນຊຸກຍູ້ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ໃຫ້ບັນລຸຄາດໝາຍ ແລະ ໄດ້ຮັບຜົນສຳເລັດເປັນຢ່າງດີ.

ໃນໂອກາດທີ່ມີຄວາມໝາຍຄວາມສຳຄັນນີ້, ອີກເທື່ອໜຶ່ງ ຕາງໜ້າໃຫ້ລັດຖະບານ ສປປ ລາວ ກໍ່ຄືປະຊາຊົນລາວບັນດາເຜົ່າ ຂໍສະແດງຄວາມຂອບອົກຂອບໃຈ ແລະ ຮູ້ບຸນຄຸນ ມາຍັງບັນດາປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ ທີ່ໄດ້ໃຫ້ການສະໜັບສະໜູນ ທາງດ້ານທຶນຮອນ ແລະ ເຕັກນິກວິຊາການ ເພື່ອປະກອບສ່ວນເຂົ້າໃນການຈັດ ຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ໃນແຕ່ລະໄລຍະ ແລະ ຫວັງຢ່າງຍິ່ງວ່າທຸກພາກສ່ວນຈະສືບຕໍ່ຮັກສາ ແລະ ເສີມຂະຫຍາຍມູນເຊື້ອອັນດີດັ່ງກ່າວໝັ້ນຄົງຕໍ່ໄປ.

ທ້າຍສຸດນີ້, ຂ້າພະເຈົ້າ ຕາງໜ້າໃຫ້ປະທານຮ່ວມກອງປະຊຸມ ຂໍສະແດງຄວາມຂອບໃຈ ບັນດາທ່ານລັດຖະມົນຕີ, ຮອງລັດຖະມົນຕີ, ຮອງປະທານຄະນະກຳມະທິການແຫ່ງຊາດ, ຮອງເຈົ້າແຂວງ, ບັນດາທ່ານເອກອັກຄະລັດຖະທູດ, ທູດຕານຸທູດ, ຄູ່ຮ່ວມພັດທະນາ, ຜູ້ຕາງໜ້າອົງການຈັດ ຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ ທີ່ໄດ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍຄວາມຮັບຜິດຊອບສູງ ແລະ ມີຄວາມເປັນເຈົ້າການຮ່ວມກັນ. ພ້ອມດຽວກັນນີ້, ຂໍຂອບໃຈ ສື່ມວນຊົນທີ່ໄດ້ເຂົ້າຮ່ວມພິທີຖະແຫຼງຂ່າວ ແລະ ຫວັງວ່າຈະໄດ້ນຳເອົາຜົນ ຂອງກອງປະຊຸມໂຕະມົນ 2022 ໃນມື້ນີ້ ໄປເຜີຍແຜ່ໃຫ້ປະຊາຊົນບັນດາເຜົ່າທົ່ວປະເທດໄດ້ຮັບຊາບຢ່າງທົ່ວເຖິງກັນ.

**(ຂໍຂອບໃຈ) !**

**----------------------------------**